**Best Start Kindergarten Assessment**
**Information for parents and carers**

# ການປະເມີນການເລີ້ມຕົ້ນຊັ້ນອະນຸບານ ທີ່ດີທີ່ສຸດ

## ຂໍ້ມູນສຳລັບພໍ່ແມ່ ແລະ ຜູ້ດູແລ

ພໍ່ແມ່ ແລະ ຜູ້ດູແລ ທີ່ຮັກແພງ

ການປະເມີນການເລີ້ມຕົ້ນຊັ້ນອະນຸບານ ທີ່ ດີທີ່ສຸດຈະມີຂຶ້ນໃນໂຮງຮຽນພວກ ເຮົາໃນ ເທີມ1

ການປະເມີນການເລີ້ມຕົ້ນຊັ້ນອະນຸບານ ທີ່ ດີທີ່ສຸດແມ່ນການ ປະເມີນທົ່ວຣັດ ທີ່ຊ່ວຍສະແດງໃຫ້ບັນດາຄູທັງຫຼາຍເຫັນໃນ ທັກສະ ໃນການຮຽນຂຽນຮຽນອ່ານ ແລະ ເລກຂອງ ນັກຮຽນ ແຕ່ລະຄົນ ໃນຕອນເລີ້ມຕົ້ນຂອງຊັ້ນອະນຸບານ. ອັນນີ້ຈະຊ່ວຍບັນດາຄູໃນການ ວາງແຜນ ການແຕ່ງບົດຮຽນທີ່ຈະຊ່ວຍອູ້ມຊູ ຄວາມ ຕ້ອງການຂອງເດັກແຕ່ລະຄົນ ໄດ້ດີທີ່ສຸດ.

ບັນດາເດັກມາໂຮງຮຽນໂດຍມີປະສົບການ, ທັກສະ ແລະ ຄວາມສາມາດອັນກວ້າງ ຂວາງ. ບາງຄົນມີຄວາມລຶ້ງເຄີຍກັບປຶ້ມ, ສາມາດຮູ້ຈັກໂຕໜັງສືແລະພະຍັນຊະນະ ຫຼື ຂຽນຊື່ຂອງພວກເຂົາໄດ້ ຫຼື ນັບໄດ້ເຖິງສິບ, ໃນຂະນະທີ່ບາງຄົນອື່ນໆຍັງບໍ່ທັນຮຽນຮູ້ ທັກສະເຫຼົ່ານີ້ເລີຍ.

ການປະເມີນການເລີ້ມຕົ້ນຊັ້ນອະນຸບານ ທີ່ ດີທີ່ສຸດຈັດຫາໃຫ້ບັນດາຄູດ້ວຍໂອກາດນັ່ງ ກັບເດັກແບບນຶ່ງຕໍ່ນຶ່ງ, ແນໃສ່ວ່າສິ່ງໃດທີ່ເດັກສາມາດເຮັດໄດ້.

ການປະເມີນນີ້ບໍ່ແມ່ນການເສັງ ແຕ່ມັນຈະ ຈັດຫາໃຫ້ບັນດາຄູດ້ວຍຂໍ້ມູນທີ່ມີປະໂຫຍດ ເພື່ອຊ່ວຍການຮຽນຂອງລູກທ່ານຢູ່ໃນໂຮງຮຽນ. ຖ້າທ່ານຕ້ອງການຖອນລູກທ່ານຈາກ ການເຂົ້າຮ່ວມໃນການປະເມີນນີ້, ກະຣຸນາ ຕິດຕໍ່ທາງໂຮງຮຽນ.

ເຈັ້ຍຂໍ້ມູນທີ່ຄັດຕິດມາພ້ອມນີ້ຈະໃຫ້ຂໍ້ມູນ ເພີ້ມເຕີມກ່ຽວກັບ ການປະເມີນການເລີ້ມຕົ້ນ ຊັ້ນອະນຸບານ ທີ່ ດີທີ່ສຸດ

ກະຣຸນາຕິດຕໍ່ທາງໂຮງຮຽນຖ້າທ່ານມີຄຳ ຖາມໃດໆກ່ຽວກັບ ການປະເມີນການ ເລີ້ມຕົ້ນຊັ້ນອະນຸບານ ທີ່ ດີທີ່ສຸດ.

## ບໍຣິການ ນາຍພາສາ ທາງ ໂທຣະສັບ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍ ທ່ານຕິດຕໍ່ທາງໂຮງຮຽນ, ກະຣຸນາໂທຫາ ບໍຣິການ ນາຍພາສາ ທາງໂທຣະສັບ ຕາມໝາຍເລກ 131 450 ແລະຂໍເອົານາຍ ພາສາທີ່ປາກພາສາຂອງທ່ານ. ນາຍພາສາ ຈະໂທຫາໂຮງຮຽນແລະຟັງຢູ່ກັບສາຍເພື່ອຊ່ວຍທ່ານໃນການເວົ້າລົມ. ທ່ານບໍ່ຕ້ອງ ເສັຍຄ່າບໍຣິການນີ້.

ທ່ານຄູໃຫຍ່